**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0343/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 15/02/2018

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ

ທີ່ນັບຖື

ເລື້ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝ ວິສາມັນ ຄັ້ງທີ 1/2018

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 22/LSX, ລົງວັນທີ 07 ມັງກອນ 2011.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“**ບໍລິສັດ**”) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝ ວິສາມັນ ຄັ້ງທີ 1/2018 ວັນທີ 14 ກຸມພາ 2018, ມີລາຍລະອຽດລຸ່ມນີ້:

1. ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໃນວັນທີ **07/03/2018** ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການແກ້ໄຂວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດ ຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມປະຊຸມດັ່ງກ່າວ.
2. ກຳນົດວັນປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ໃນວັນທີ **06/04/2018** ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 01, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການແກ້ໄຂວັນ-ເວລາ ແລະ ສະຖານທີ່ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

<u>ກຳມະການສະພາບໍລິຫານ</u>

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ລັດຕະນາ ປະທຸມວັນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392

ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la